ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 3 (Special Issue) 2020, ເລກທະບຽນ ISSN 2521-0653

# ສະພາບ ແລະ ການພັດທະນາທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ[1]

**ສິນດາວອນ ອຸດທະຈັກ[2], ວິໄລພອນ ສິມສະໝອນ, ສຸລິຈັນ ທິດາວັນ ແລະ ໜຸ້ຍ ວົງມະນີຈັນ**

*ພາກວິຊາ ບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ*

**ບົດຄັດຫຍໍ້**

ໃນການຄົ້ນຄວ້າ ສະພາບ ແລະ ການພັດທະນາທຸລະກິດທີ່ພັກແຮມຢູ່ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງໃນຄັ້ງນີ້ ມີຈຸດປະສົງຂອງການສຶກສາ 2 ຈຸດປະສົງຄື: 1) ສະພາບການພັດທະນາທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ 2) ສຶກສານະໂຍບາຍຂອງລັດຖະບານຕໍ່ການພັດທະນາທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ ເຊິ່ງມາເປັນການປະກອບການສຶກສາຄັ້ງນີ້.

ຜົນຂອງການສຶກສາທາງດ້ານສິ່ງອຳນວຍຄວາມສະດວກໃນໄລຍະປີ 2005-2017 ພົບວ່າທຸລະກິດເຮືອນພັກມີການເພີ່ມຂຶ້ນ 276 ແຫ່ງ, ແຕ່ຈຳນວນຫ້ອງນອນເພີ່ມຂຶ້ນໂດຍລວມແມ່ນ 3.334 ຫ້ອງ, ຕຽງລວມທັງໝົດເພີ່ມຂຶ້ນໂດຍລວມແມ່ນ 5.708 ໜ່ວຍ. ໃນນັ້ນຈຳນວນຫ້ອງສອງຕຽງເພີ່ມຂຶ້ນໂດຍລວມແມ່ນ 1.637 ໜ່ວຍ, ຕຽງຄູ່ທັງໝົດເພີ່ມຂຶ້ນແມ່ນ 1.447 ໜ່ວຍ, ຕຽງດ່ຽວທັງໝົດເພີ່ມຂຶ້ນແມ່ນ 214 ໜ່ວຍ. ອີງຕາມສະຖິຕິ ແລະ ຂໍ້ມູນດັ່ງກ່າວສະແດງໃຫ້ເຫັນວ່າ ການພັດທະນາ ຫຼື ຂະຫຍາຍທີ່ພັກແຮມແມ່ນຍັງມີເປີເຊັນໜ້ອຍ, ແຕ່ການພັດທະນາທີ່ພັກແຮມຈະເປັນລັກສະນະການຂະຫຍາຍຕໍ່ເຕີມໃຫ້ກ້ວາງຂວາງກວ່າເກົ່າ ໂດຍການເພີ່ມຈຳນວນຫ້ອງນອນ, ຕຽງນອນ ແລະ ປັບສະພາບແວດລ້ອມໃຫ້ມີຄວາມສະດວກສະບາຍເພື່ອດຶງດູດລູກຄ້າໃຫ້ໄດ້ຈຳນວນຫຼາຍຂຶ້ນ.

ການພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວອຳນາດການປົກຄອງແຂວງຫຼວງພະບາງກໍ່ໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຢ່າງຈິງຈັງ. ຈາກຮູບ 1 ສະແດງໃຫ້ເຫັນວ່າ ໃນປີ 2016 ມີແຮງງານຄົນລາວ ແລະ ທາງອ້ອມດ້ານການທ່ອງທ່ຽວ 62.951 ຄົນ ໃນນັ້ນແຮງງານທາງກົງກວມເກືອບ 20%, ໃນປີ 2017 ມີແຮງງານທາງກົງ ແລະ ທາງອ້ອມດ້ານການທ່ອງທ່ຽວເພີ່ມຂຶ້ນ 701 ຄົນ ໃນນັ້ນແຮງງານທາງເພີ່ມຂຶ້ນ 2% ເມື່ອທຽບໃສ່ປີທີ່ຜ່ານມາ. ຈາກຮູບ 2 ສະແດງໃຫ້ເຫັນວ່າໃນປີ 2017 ຈາກແຮງງານທາງກົງຕໍ່ກັບຂະແໜງການທ່ອງທ່ຽວທັງໝົດ ມີແຮງງານທີ່ກ່ຽວຂ້ອງກັບທີ່ພັກແຮມ 25 %.

ລາຍຮັບຈາກການທ່ອງທ່ຽວຢູ່ນະຄອນຫຼວງພະບາງ ແຂວງຫຼວງພະບາງ, ໃນປີ 2005 ແມ່ນໄດ້ຮັບຂອງນັກທ່ອງທ່ຽວ 14.024.745 ໂດລາສະຫະລັດ. ມາຮອດປີ 2011 ເຫັນວ່າມີລາຍຮັບ 96.077.100 ໂດລາສະຫະລັດ ເຊິ່ງເຫັນວ່າຖ້າທຽບໃສ່ປີ 2011 ແມ່ນ ມີອັດຕາເພີ່ມຂຶ້ນ 82.052.355 ໂດລາສະຫະລັດ. ມາຮອດໄລຍະປີ 2017 ແມ່ນມີລາຍຮັບ 174.515.598 ໂດລາສະຫະລັດ. ຖ້າທຽບໃສປີ 2011 ແມ່ນເພີ່ມຂຶ້ນ ຈຳນວນ 78.438.498 ໂດລາສະຫະລັດ ເຫັນວ່າລາຍຮັບຈາກການທ່ອງທ່ຽວແມ່ນມີລັກສະນະເພີ່ມຂຶ້ນໄປຢ່າງຕໍ່ເນື່ອງ ແລະ ສາມາດສ້າງແຫຼ່ງລາຍຮັບເຂົ້າງົບປະມານໄດ້ຢ່າງເຕັມສ່ວນ.

**ຄຳສຳຄັນ:** ທຸລະກິດທີ່ພັກແຮມ, ການພັດທະນາທຸລະກິດທີ່ພັກແຮມ, ທີ່ພັກແຮມນະຄອນຫຼວງພະບາງ.

---

[1] ***ການອ້າງອີງພາສາລາວ***

*ສິນດາວອນ ອຸດທະຈັກ ແລະ ຄະນະ. (2020).* ສະພາບ ແລະ ການພັດທະນາທຸລະກິດທີ່ພັກແຮມ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ, *ວາລະສານວິທະຍາສາດ ມະຫາວິທະຍາໄລ ສຸພານຸວົງ, ສະບັບທີ 6 ເຫຼັ້ມທີ 3 (Special Issue), ໜ້າທີ: 1424-1436.*

[2] ***ຕິດຕໍ່ພົວພັນ***

*ສິນດາວອນ ອຸດທະຈັກ, ພາກວິຊາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ*

*Tel: 020 5567 1108*

# Current State and Development of the Accommodation Business in LuangPrabang

**Sindavone OUTTHACHACK[3], Vilayphone SOMSAMONE, soulichanh THIDAVANH and nouy VONGMANICHANH**

*Department of Management, Faculty of Economics and Tourisms, Souphanouvong University, Laos*

**Abstract**

The study of the Current State and Development of the Accommodation in Luang Prabang, there are 2 objectives of research: 1) the Current Situation of the Accommodation business in Luang Prabang, 2) the government policy towards the development of the Accommodation Business in Luang Prabang.

Results of a study of facilities during the period 2005-2017 found that the number of accommodations grew by 276, but the total number of bedrooms increased by 3,334 rooms, with the total number of beds increasing to 5,708 units. Of these, the total number of double beds increased to 1,637 units, with the total number of beds increased to 1,447, with the total number of single beds being 214. According to statistics and data, the development or expansion of accommodation is still small, but the development of the hotel will be further expanded by increasing the number of bedrooms, beds and the environment to attract more clients.

Human Resource Development in Tourism Sector, the authorities of Luang Prabang province have been given serious consideration. From Figure 1 shows that there were 62,951 Lao and indirect tourism workers in 2016, with nearly 20% direct labor, while in 2017 there were 701 direct and indirect labor, with 2% more direct labor compared to the previous year. From Figure 2, it shows that in 2017, from the direct labor force to the tourism sector, the total occupancy rate was 25%.

Tourism revenue in Luang Prabang, Luang Prabang, in 2005 was US $ 14,024,745. As of 2011, there were $ 96,077,100, which saw an increase of US $ 82,052,355. As of 2017, there were $ 174,515,598 revenues. Compared to 2011, the amount of US $ 78,438,498 saw that tourism revenue was steadily increasing and was able to generate a full source of revenue.

**Keywords:** Accommodations Business, Development of Accommodation Business, Accommodation in LuangPrabang

[3] *Correspondence*
Sindavone OUTTHACHACK, Department of Management, Faculty of Economics and Tourisms, Souphanouvong University, Tel: 020 5567 1108

## 1. ພາກສະເໜີ (Introduction)

ອຸດສາຫະກຳການທ່ອງທ່ຽວເປັນຂະແໜງການໜຶ່ງທີ່ມີບົດບາດສຳຄັນຕໍ່ເສດຖະກິດ-ສັງຄົມ ຂອງປະເທດຊາດປະເທດລາວແມ່ນອີງໃສ່ການທ່ອງ ທ່ຽວເປັນພື້ນຖານທີ່ສຳຄັນ ໃນການນຳລາຍໄດ້ເຂົ້າປະເທດທັງຊ່ວຍໃຫ້ເສດຖະກິດຂອງຊາດມີການຂະ ຫຍາຍຕົວໄດ້ດີ (Pansaen 2561), ຈຶ່ງເຮັດໃຫ້ການ ທ່ອງທ່ຽວມີບົດບາດພົ້ນເດັ່ນຂຶ້ນຢ່າງຕໍ່ເນື່ອງຕໍ່ກັບການພັດທະນາເສດຖະກິດ-ສັງຄົມ ຂອງປະເທດຊາດທັງນີ້ກໍ່ຍ້ອນພັກ-ລັດຖະບານໄດ້ມີນະໂຍບາຍສົ່ງເສີມການລົງທຶນ ແລະ ເອົາໃຈໃສ່ຕໍ່ກັບການພັດທະນາອຸດສາ ຫະກຳການທ່ອງທ່ຽວ ກໍ່ຄືອຸດສາຫະກຳທີ່ພັກແຮມ ເພື່ອເອື້ອຍອຳນວຍຄວາມສະດວກໃນການທ່ອງທ່ຽວຂອງນັກທ່ອງທ່ຽວ. ອຸດສາຫະກຳການທ່ອງທ່ຽວ ແລະ ອຸດສາຫະກຳທີ່ພັກແຮມຍັງສ້າງລາຍຮັບໃຫ້ປະເທດຊາດຢ່າງມະຫາສານໃນແຕ່ລະປີ ເຫັນໄດ້ປີ 2012 ມີຈຳນວນນັກທ່ອງທ່ຽວທັງໝົດແມ່ນ 3.330.072 ຄົນ ແລະ ສ້າງລາຍຮັບໃຫ້ກັບປະເທດແມ່ນ 506.022.586 ໂດລາສະຫະລັດ ໃນປີ 2018 ຈຳນວນນັກທ່ອງທ່ຽວເພີ່ມຂຶ້ນເປັນ 4.186.432 ຄົນ ແລະ ສ້າງລາຍຮັບໃຫ້ປະເທດທັງໝົດແມ່ນ 811.010.661 ໂດລາສະຫະລັດ (Aloun BOUNMIXAY 2018).

ພາຍຫຼັງກອງປະຊຸມໃຫຍ່ຄັ້ງທີ່ IV ຂອງສູນກາງພັກໃນປີ 1986 ທີ່ໄດ້ມີການກຳນົດ ແນວທາງການປ່ຽນແປງນະໂຍບາຍໃໝ່ຮອບດ້ານ ແລະ ການເປີດກວ້າງການຮ່ວມມືກັບຕ່າງປະເທດ, ການທ່ອງທ່ຽວກໍ່ໄດ້ມີບົດບາດໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດຢ່າງກວ້າງຂວາງ. ລັດຖະບານໄດ້ກຳນົດ ແລະ ປະກາດຈັດຕັ້ງປະຕິບັດການພັດທະນາ ແລະ ສົ່ງເສີມລະບົບການທ່ອງທ່ຽວເພື່ອຮອງຮັບນັກທ່ອງທ່ຽວ, ການບໍລິການອື່ນໆໃຫ້ມີການຂະຫຍາຍຕົວ ແລະ ການພັດທະນາພື້ນຖານໂຄງລ່າງຢ່າງຫຼວງຫຼາຍ ອັນເນື່ອງມາຈາກເມືອງຫຼວງພະບາງໄດ້ຖືກຮອງຮັບໃຫ້ເປັນເມືອງມໍລະດົກໂລກໃນວັນທີ 02 ເດືອນ ທັນວາ 1995 ຈາກອົງການຢູແນັສໂກ (ເຮີ 2018) ແລະ ໄດ້ເຮັດໃຫ້ຊື່ສຽງຂອງເມືອງຫຼວງພະບາງເປັນທີ່ຮັບຮູ້ຂອງໂລກສາມາດສ້າງລາຍໄດ້ໃຫ້ກັບແຂວງຫຼວງພະບາງໃນແຕ່ລະປີ ເຊັ່ນ: ປີ 2012 ມີຈຳນວນນັກທ່ອງທ່ຽວທັງໝົດແມ່ນ 410.855 ຄົນ ສາມາດສ້າງລາຍໄດ້ໃຫ້ກັບແຂວງຫຼວງພະບາງທັງໝົດແມ່ນ 126.659.755 $ ໃນປີ 2017 ມີຈຳນວນນັກທ່ອງທ່ຽວທັງໝົດແມ່ນ 655.412 ຄົນ ສາມາດສ້າງລາຍໄດ້ ໃຫ້ ກັບແຂວງຫຼວງພະບາງທັງໝົດແມ່ນ 200.061.398 $. ຈຶ່ງເຮັດໃຫ້ຫົວໜ່ວຍທຸລະກິດທີ່ພັກແຮມໃນເມືອງຫຼວງພະບາງເພີ່ມຂຶ້ນເລື້ອຍໆ ໂດຍເຫັນໄດ້ໃນແຕ່ລະປີໂຮງແຮມ ແລະ ລີສອດຈະມີການເພີ່ມຂຶ້ນ ໃນປີ 2012 ມີຈຳນວນໂຮງແຮມ-ລີສອດແມ່ນ 57 ແຫ່ງ ປີ 2017 ມີຈຳນວນໂຮງແຮມ-ລີສອດແມ່ນ 81 ແຫ່ງ (ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ, 2017).

ທຸລະກິດທີ່ພັກແຮມເປັນອົງປະກອບໜຶ່ງໃນການສະໜັບສະໜູນການທ່ອງທ່ຽວໃນແຂວງຫລວງພະບາງ ໂດຍສະເພາະໄດ້ມີບົດບາດໃນການສະໜອງການບໍລິການດ້ານທີ່ພັກໃຫ້ແຂກທັງພາຍໃນ ແລະ ຕ່າງປະເທດທີ່ມາທ່ອງທ່ຽວຫຼວງພະບາງ, ທຸລະກິດທີ່ພັກແຮມຍັງເປັນຫົວໜ່ວຍທຸລະກິດທີ່ສາມາດສ້າງອາຊີບໃຫ້ແກ່ຄົນທ້ອງຖິ່ນໄດ້ມີວຽກເຮັດງານທຳ ແລະ ສ້າງລາຍຮັບແກ່ປະຊາຊົນທ້ອງຖິ່ນ ກໍ່ຄືສ້າງລາຍຮັບໃຫ້ແກ່ແຂວງ (ດາລຸນນີ ມະນີວັນ 2019). ການຄຸ້ມຄອງທຸລະກິດທີ່ພັກແຮມ ມີບົດບາດສຳຄັນໃນການກຳນົດຄວາມເປັນລັກສະນະສະເພາະ, ມາດຕະຖານການບໍລິການ, ພາບພົດ ແລະ ຊື່ສຽງໃນນາມຂອງເມືອງມໍລະດົກໂລກ ໃນນະຄອນຫລວງພະບາງ ເພື່ອສ້າງຄວາມພໍໃຈຕາມຄວາມຄາດຫວັງຂອງນັກທ່ອງທ່ຽວ. ພ້ອມນັ້ນ, ທຸລະກິດທີ່ພັກແຮມກໍ່ຍັງແມ່ນທຸລະກິດປະເພດໜຶ່ງທີ່ໃຫ້ບໍລິການແກ່ປະຊາຊົນ, ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ, ທີ່ສາມາດນຳລາຍໄດ້ເຂົ້າສູ່ທ້ອງຖິ່ນ, ທຸລະກິດທີ່ພັກແຮມມີແນວໂນ້ມຂະຫຍາຍ ຕົວຫຼາຍຂຶ້ນ (Lerdgrounprayad 2561).

ຍ້ອນເຫັນໄດ້ບົດບາດ ແລະ ຄວາມສຳຄັນຂອງການດຳເນີນທຸລະກິດທີ່ພັກແຮມຕໍ່ການພັດທະນາເສດຖະກິດ-ສັງຄົມທາງດ້ານການສ້າງວຽກເຮັດງານທຳໃຫ້ປະຊາຊົນ ມີລາຍໄດ້ ແລະ ຊ່ວຍຫຼຸດຜ່ອນບັນຫາການຫວ່າງງານ. ສະນັ້ນ, ຜູ້ວິໄຈຈິ່ງມີຄວາມສົນໃຈສຶກສາສະພາບ ແລະ ການພັດທະນາທຸລະກິດທີ່ພັກແຮມ ໃນນະຄອນຫຼວງພະບາງ, ໂດຍມີຈຸດປະສົງ 1) ສະພາບການພັດທະນາທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ, 2) ສຶກສານະໂຍບາຍຂອງລັດຖະບານຕໍ່ການພັດທະນາທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ.

**2. ວິທີການດຳເນີນການຄົ້ນຄວ້າ (Methodology)**

ການຄົ້ນຄວ້າໃນຄັ້ງນີ້ ແມ່ນນຳໃຊ້ການຄົ້ນຄວ້າແບບປະສົມປະສານທັງແບບຄຸນນະພາບ ແລະ ປະລິມານ ມີການເກັບກຳລວບລວມຂໍ້ມູນຈາກ 2 ແຫຼ່ງຄື: ຂໍ້ມູນປະຖົມພູມ ແລະ ຂໍ້ມູນທຸຕິຍະພູມ. ຂໍ້ມູນປະຖົມພູມແມ່ນໄດ້ຈາກການສຳພາດ ຜູ້ບໍລິຫານລະດັບສູງຂອງພາກສ່ວນທີ່ກ່ຽວຂ້ອງລວມທັງຜູ້ບໍລິຫານ ຫຼື ເຈົ້າຂອງທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ. ຂໍ້ມູນທຸຕິຍະພູມທີ່ໄດ້ຈາກແຫຼ່ງຕ່າງໆເຊັ່ນ: ເອກະສານ, ປຶ້ມຕຳລາ, ບົດລາຍງານ-ບົດແຜນການ ແລະ ອື່ນໆ ທີ່ໄດ້ໂດຍກົງຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຈາກອິນເຕີເນັດ. ປະຊາກອນ ແລະ ກຸ່ມຕົວຢ່າງຫຼັກ ທີ່ໃຊ້ເຂົ້າໃນການສຶກສາແມ່ນຫົວໜ່ວຍທຸລະກິດໂຮງແຮມ ແລະ ພະແນກທີ່ກ່ຽວຂ້ອງ ເຊັ່ນ: ຜູ້ບໍລິຫານ ຫຼື ເຈົ້າຂອງທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ ຈຳນວນ 10 ທ່ານທີ່ເປັນຕົວແທນໃຫ້ທີ່ພັກແຮມທັງໝົດ, ຫ້ອງການພັດທະນາການທ່ອງທ່ຽວ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ ແຂວງຫຼວງພະບາງ, ຫ້ອງການມໍລະດົກໂລກ ແຂວງຫຼວງພະບາງ, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກແຜນການ ແລະ ແຜນການ ແລະ ການລົງທຶນ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພາກວິຊາບໍລິຫານການທ່ອງທ່ຽວ ມະຫາວິທະຍາໄລສຸພານຸວົງ, ສະຖາບັນລານົດ.

ໃນການສຶກສາໃນຄັ້ງນີ້ໄດ້ວາງກອບແນວຄວາມຄິດຂອງການສຶກສາຄື: ສະພາບ ແລະ ການພັດທະນາທຸລະກິດ ຮ້ານອາຫານ ຂຶ້ນກັບປັດໃຈ 3 ດ້ານທີ່ກ່ຽວຂ້ອງເຊັ່ນ: ດ້ານສິ່ງອຳນວຍຄວາມສະດວກ, ດ້ານບຸກຄະລາກອນ, ແລະ ດ້ານເສດຖະກິດ. ຂອບເຂດທາງດ້ານເວລາແມ່ນກຳນົດແຕ່ປີ 2005 ເຖິງປັດຈຸບັນ.

**3. ຜົນໄດ້ຮັບ (Results)**

**3.1 ສະພາບ ແລະ ການພັດທະນາທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ**

ແຂວງຫຼວງພະບາງເປັນແຂວງໜຶ່ງ ທີ່ຕັ້ງຢູ່ທາງພາກເໜືອຂອງ ສປປ ລາວ, ເປັນແຂວງພູດອຍ, ມີເນື້ອທີ່ທັງໝົດ 16.875 ກິໂລຕາແມັດ. ຈຳນວນປະຊາກອນທັງໝົດ 7.273.919 ຄົນ (ສະຖິຕິປີ 2020) (Wordometer, 2020) ປະຊາຊົນສ່ວນໃຫຍ່ແມ່ນຖືເອົາອາຊີບ ການກະສິກຳ, ປູກຝັງ , ລ້ຽງສັດ ແລະ ການບໍລິການທ່ອງທ່ຽວ. ນັບແຕ່ຫຼວງພະບາງໄດ້ປະກາດ ຮັບຮອງເຂົ້າເປັນເມືອງມໍລະດົກໂລກ ໃນວັນທີ 9 ທັນວາ 1995 ເປັນຕົ້ນມາ ການທ່ອງທ່ຽວໄດ້ມີບົດບາດໃນການພັດທະນາເສດຖະກິດ-ສັງຄົມຂອງຫຼວງພະບາງ. ລັດຖະບານກໍໄດ້ມີການກຳນົດ ແລະ ປະກາດຈັດຕັ້ງປະຕິບັດການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວທາງດ້ານວັດຖຸນະທຳ, ທຳມະຊາດ ແລະ ປະຫວັດສາດ ເພື່ອຮອງຮັບໃຫ້ແກ່ການທ່ອງທ່ຽວ ແລະ ການບໍລິການອື່ນໆ ໃຫ້ມີການຂະຫຍາຍຕົວ, ລັດຖະບານໄດ້ທຸ້ມເທໃສ່ການພັດທະນາ ພື້ນຖານໂຄງລ່າງຢ່າງຫຼວງຫຼາຍດ້ວຍການສ້າງເສັ້ນທາງຄົມມະນາຄົມໃຫ້ເຊື່ອມຈອດກັນທົ່ວປະເທດ ແລະ ເຊື່ອມຈອດກັບບັນດາປະເທດເພື່ອນບ້ານບໍ່ວ່າຈະຢູ່ທາງພາກເໜືອ, ພາກກາງ ແລະ ພາກໃຕ້ (ເກົາລໍ 2019).

ຈາກການປະຕິບັດນະໂຍບາຍພັດທະນາ ແລະ ການສົ່ງເສີມການທ່ອງທ່ຽວທີ່ກ່າວມານັ້ນ, ໄດ້ເຮັດໃຫ້ຂະແໜງ ການທ່ອງທ່ຽວມີການຂະຫຍາຍຕົວຢ່າງວ່ອງໄວ ສິ່ງເຫຼົ່ານັ້ນໄດ້ຜັກດັນໃຫ້ສະພາບການທ່ອງ ທ່ຽວມີການຂະຫຍາຍຕົວຢ່າງກະໂດດຂັ້ນ ແລະ ການທ່ອງທ່ຽວຂອງຫຼວງພະບາງໄດ້ພົ້ນເດັ່ນຂຶ້ນຢູ່ໃນເວທີສາກົນຈົນເຮັດໃຫ້ຫຼວງພະບາງສາມາດຍາດໄດ້ນາມມະຍົດກາຍເປັນເມືອງທ່ອງທ່ຽວຍອດນິຍົມຂອງໂລກ 13 ປີ ຕິດຕໍ່ກັນ (2006-2007-2008-2010-2011-2012 ແລະ 2018) ຈາກວາລະສານຊັ້ນນຳຊື່ດັງຂອງໂລກເຊັ່ນ: ວັນເດີລັດ

(Wanderlust) ຈາກປະເທດອັງກິດ, ເປັນເມືອງສີຂຽວທີ່ໜ້າຢູ່, ເປັນເມືອງສິ່ງແວດລ້ອມໜ້າຢູ່ຂອງອາຊຽນ ແລະ ໄດ້ປະກາດໃຫ້ເປັນເມືອງທີ່ປອດຄວັນຢາສູບໃນປີ 2015, ພິເສດໃນປີ 2015 ຜ່ານມາວັດຊຽງທອງແມ່ນໄດ້ຮັບການຢັ້ງຢືນ ການອະນຸລັກ ວັດທະນະທຳ ທີ່ດີເດັ່ນແຫ່ງພາກພື້ນອາຊີປາຊີຟິກ ຂອງອົງການອຸຍແນັດໂກ ແລະ ຕະຫຼາດກາງຄືນກໍໄດ້ຮັບລາງວັນເປັນຕະຫຼາດລະດັບ 4 ດາວເຄິ່ງ ຈາກອົງການຈັດຕັ້ງສາກົນ (SOMSAMONE 2018). ເຊິ່ງເຮັດໃຫ້ນັກທ່ອງທ່ຽວເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ຫຼວງພະບາງເພີ່ມຂຶ້ນໃນແຕ່ລະປີ. ສະແດງໃຫ້ເຫັນຈາກຕົວເລກນັກທ່ອງທ່ຽວສາກົນໃນປີ 2005 ມີ 68.250 ຄົນ ແລະ ທຽບໃສ່ປີ 2010 ມີ 216.864 ຄົນ, ເພີ່ມຂຶ້ນ 217,75 ສ່ວນຮ້ອຍ ແລະ ສາມາດສ້າງລາຍຮັບໄດ້ຫຼາຍກວ່າ 75,902,400 ໂດລາສະຫະລັດ ໃນປີ 2010 (ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ, 2017).

ເພື່ອຮັບຮອງໃຫ້ແກ່ການບໍລິການທ່ອງທ່ຽວ, ອຳນາດການປົກຄອງແຂວງຫຼວງພະບາງໄດ້ເປີດກ້ວາງການລົງທຶນພາຍໃນ ແລະ ຕ່າງປະເທດ ເຫັນໄດ້ຈາກທຸລະກິດການທ່ອງທ່ຽວເພີ່ມຂຶ້ນຢ່າງຕໍ່ເນື່ອງໃນແຕ່ລະປີ. ໃນປີ 2018 ທົ່ວແຂວງຫຼວງພະບາງມີທີ່ພັກແຮມຈຳນວນ 477 ແຫ່ງ (ສະຖິຕິວຽກງານການທ່ອງທ່ຽວ, 2018) ສະເລ່ຍລາຍຮັບຈາກການທ່ອງທ່ຽວ 174.515.598 ໂດລາສະຫະລັດ. ນອກຈາກນີ້ບັນດາພື້ນຖານໂຄງລ່າງທີ່ຮັບຮອງໃຫ້ແກ່ການທ່ອງທ່ຽວ, ຄຸນນະພາບຂອງການບໍລິການການທ່ອງທ່ຽວ ແມ່ນໄດ້ຮັບການພັດທະນາ ແລະ ປັບປຸງໃຫ້ດີຂຶ້ນ. ສິ່ງທີ່ພົ້ນເດັ່ນຢູ່ຫຼວງພະບາງແມ່ນການທີ່ໄດ້ປັບປຸງ ແລະ ຍົກລະດັບສະໜາມບິນສາກົນ ເພື່ອຮອງຮັບເຄື່ອງບິນຂະໜາດໃຫຍ່ ທີ່ສາມາດເຊື່ອມຕໍ່ກັບບັນດາປະເທດອ້ອມຂ້າງ ແລະ ບັນດາປະເທດຕ່າງໆໃນໂລກ (ດາລຸນນີ ມະນີວັນ 2019)

**3.1.1 ດ້ານສິ່ງອຳນວຍຄວາມສະດວກຂອງການພັດທະນາທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງແຕ່ປີ 1995 - 2017**

.

ຕາຕະລາງ 1: ຈຳນວນທີ່ພັກແຮມຢູ່ແຂວງຫຼວງພະບາງ ແຕ່ປີ 2005-2017

| ປີ | ທີ່ພັກແຮມ | ຈຳນວນ | | ປະເພດຫ້ອງ | | | ອັດຕາສ່ວນການພັກແຮມ |
|---|---|---|---|---|---|---|---|
| | | ຫ້ອງ | ຕຽງ | ສອງຕຽງ | ຕຽງຄູ່ | ຕຽງດ່ຽວ | |
| 2005 | 163 | 1.699 | 2.975 | 706 | 801 | 192 | 70% |
| 2006 | 173 | 1.812 | 3.088 | 753 | 855 | 204 | 72% |
| 2007 | 224 | 2.162 | 3.439 | 861 | 1.034 | 267 | 74% |
| 2008 | 272 | 2.726 | 4.285 | 1.176 | 1.239 | 311 | 73% |
| 2009 | 296 | 2.990 | 4.596 | 1.337 | 1.317 | 336 | 68% |
| 2010 | 304 | 3.260 | 4.989 | 1.460 | 1.457 | 343 | 63% |
| 2011 | 335 | 3.581 | 5.480 | 1.684 | 1.529 | 370 | 68% |
| 2012 | 365 | 3.941 | 6.026 | 1.830 | 1.754 | 375 | 71% |
| 2013 | 380 | 4.126 | 6.364 | 1.859 | 1.888 | 379 | 55% |
| 2014 | 397 | 4.476 | 6.928 | 2.026 | 2.064 | 386 | 61% |
| 2015 | 403 | 4.542 | 7.009 | 2.056 | 2.094 | 392 | 54% |
| 2016 | 415 | 4.714 | 7.312 | 2.193 | 2.127 | 394 | 53% |
| 2017 | 430 | 5.033 | 8.683 | 2.379 | 2.248 | 406 | 62% |

ແຫຼ່ງຂໍ້ມູນ: ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ 2017




| | 2005 | 2006 | 2007 | 2008 | 2009 | 2010 | 2011 | 2012 | 2013 | 2014 | 2015 | 2016 | 2017 |
|---|---|---|---|---|---|---|---|---|---|---|---|---|---|
| ໂຮງແຮມ ແລະ ຣີສອດ | 17 | 18 | 21 | 36 | 41 | 44 | 54 | 57 | 60 | 72 | 76 | 74 | 81 |
| ຈຳນວນຫ້ອງ | 532 | 569 | 624 | 924 | 1006 | 1171 | 1333 | 1477 | 1554 | 1864 | 1914 | 1956 | 2200 |
| ຈຳນວນຕຽງ | 950 | 979 | 1047 | 1497 | 1642 | 1852 | 2108 | 2330 | 2524 | 3028 | 3088 | 3134 | 4400 |
| 2 ຕຽງ | 238 | 252 | 294 | 504 | 574 | 616 | 783 | 865 | 887 | 1042 | 1067 | 1079 | 1237 |
| ຕຽງຄູ່ | 294 | 317 | 330 | 420 | 432 | 555 | 552 | 612 | 667 | 822 | 847 | 877 | 963 |
| ຕຽງດ່ຽວ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |

ຮູບ 1: ຈຳນວນໂຮງແຮມ ແລະ ຣີສອດຢູ່ແຂວງຫຼວງພະບາງ ແຕ່ປີ 2005-2017

ແຫຼ່ງຂໍ້ມູນ: ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ 2017, ໜ້າ 23




| | 2005 | 2006 | 2007 | 2008 | 2009 | 2010 | 2011 | 2012 | 2013 | 2014 | 2015 | 2016 | 2017 |
|---|---|---|---|---|---|---|---|---|---|---|---|---|---|
| ເຮືອນພັກ | 146 | 155 | 203 | 236 | 255 | 260 | 281 | 308 | 320 | 325 | 327 | 341 | 349 |
| ຈຳນວນຫ້ອງ | 1167 | 1243 | 1538 | 1802 | 1984 | 2089 | 2248 | 2464 | 2572 | 2612 | 2628 | 2758 | 2833 |
| ຈຳນວນຕຽງ | 2025 | 2109 | 2392 | 2788 | 2954 | 3137 | 3372 | 3696 | 3840 | 3900 | 3921 | 4178 | 4283 |
| 2 ຕຽງ | 468 | 501 | 567 | 672 | 763 | 844 | 901 | 965 | 972 | 984 | 989 | 1114 | 1142 |
| ຕຽງຄູ່ | 507 | 538 | 704 | 819 | 885 | 902 | 977 | 1142 | 1221 | 1242 | 1247 | 1250 | 1285 |
| ຕຽງດ່ຽວ | 192 | 204 | 267 | 311 | 336 | 343 | 370 | 375 | 379 | 386 | 392 | 394 | 406 |

ຮູບ 2: ຈຳນວນເຮືອນພັກຢູ່ແຂວງຫຼວງພະບາງ ແຕ່ປີ 2005-2017

ແຫຼ່ງຂໍ້ມູນ: ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ 2017, ໜ້າ 23

ຈາກຕາຕະລາງ 1, ສະແດງໃຫ້ເຫັນວ່າ ຈາກປີ 2005 ຫາ 2017 ຈຳນວນທີ່ພັກແຮມທີ່ເພີ່ມຂຶ້ນໃນແຕ່ລະປີມີຈັ່ງວະທີ່ຊັກຊ້າ ຖ້າທຽບໃສ່ການເພີ່ມຂຶ້ນຂອງຈຳນວນຫ້ອງນອນ, ເຊິ່ງເຫັນໄດ້ ຈຳນວນທີ່ພັກແຮມປີ 2005 ຫາ ປີ 2017 ມີຈຳນວນເພີ່ມຂຶ້ນໂດຍລວມ 267 ແຫ່ງ, ແຕ່ຈຳນວນຫ້ອງນອນເພີ່ມຂຶ້ນໂດຍລວມແມ່ນ 3.334 ຫ້ອງ, ຕຽງລວມທັງໝົດເພີ່ມຂຶ້ນໂດຍລວມແມ່ນ 5.708 ໜ່ວຍ. ໃນນັ້ນຈຳນວນຫ້ອງສອງຕຽງເພີ່ມຂຶ້ນໂດຍລວມແມ່ນ 1.637 ໜ່ວຍ, ຕຽງຄູ່ທັງໝົດເພີ່ມຂຶ້ນແມ່ນ 1.447 ໜ່ວຍ, ຕຽງດ່ຽວທັງໝົດເພີ່ມຂຶ້ນແມ່ນ

214 ໜ່ວຍ. ອີງຕາມສະຖິຕິ ແລະ ຂໍ້ມູນດັ່ງກ່າວສະແດງໃຫ້ເຫັນວ່າ ການພັດທະນາ ຫຼື ຂະຫຍາຍທີ່ພັກແຮມແມ່ນຍັງມີເປີເຊັນໜ້ອຍ, ແຕ່ການພັດທະນາທີ່ພັກແຮມຈະເປັນລັກສະນະການຂະຫຍາຍຕໍ່ເຕີມໃຫ້ກ້ວາງຂວາງກວ່າເກົ່າໂດຍການເພີ່ມຈຳນວນຫ້ອງນອນ, ຕຽງນອນ ແລະ ປັບສະພາບແວດລ້ອມໃຫ້ມີຄວາມສະດວກສະບາຍເພື່ອດຶງດູດລູກຄ້າໃຫ້ໄດ້ຈຳນວນຫຼາຍຂຶ້ນ (ເກົາລໍ 2019).

ທຸລະກິດທີ່ພັກແຮມ ແລະ ທຸລະກິດທີ່ກ່ຽວຂ້ອງກັບການບໍລິການກໍ່ໄດ້ມີການເພີ່ມຂຶ້ນ ແລະ ໄດ້ມີການຂະຫຍາຍຕົວເພື່ອຮອງຮັບລູກຄ້າທີ່ເຂົ້າມາທ່ອງທ່ຽວເມືອງມໍລະດົກໂລກ ຫຼວງພະບາງ ໃນໄລຍະເບື້ອງຕົ້ນການບໍລິການດ້ານທີ່ພັກແຮມແມ່ນຍັງບໍ່ທັນກວ້າງຂວາງມີພຽງການໃຫ້ບໍລິການຫ້ອງພັກ ແລະ ຫ້ອງອາຫານເທົ່ານັ້ນສ່ວນການບໍລິການອື່ນໆແມ່ນຍັງບໍ່ທັນເກີດຂຶ້ນ. ແຕ່ມາຮອດປະຈຸບັນເຫັນວ່າການສະພາບການພັດທະນາທຸລະກິດທີ່ພັກແຮມໃນນະຄອນຫຼວງພະບາງແມ່ນມີການພັດທະນາຢ່າງກະໂດດຂັ້ນ ແລະ ການຊອກຫາການບໍລິການຕ່າງໆເຂົ້າມາໃຊ້ໃນທີ່ພັກແຮມເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວໃນແຕ່ລະປີ (ດາລຸນນີ ມະນີວັນ, 2019)

**3.1.2 ແຮງງານ ແລະ ບຸກຄະລາກອນ**

ການພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວອຳນາດການປົກຄອງແຂວງຫຼວງພະບາງກໍ່ໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຢ່າງຈິງຈັງ. ຈາກຮູບ 1 ສະແດງໃຫ້ເຫັນວ່າ ໃນປີ 2016 ມີແຮງງານຄົນລາວ ແລະ ທາງອ້ອມດ້ານການທ່ອງທ່ຽວ 62,951 ຄົນ ໃນນັ້ນແຮງງານທາງກົງກວມເກືອບ 20%, ໃນປີ 2017 ມີແຮງງານທາງກົງ ແລະ ທາງອ້ອມດ້ານການທ່ອງທ່ຽວເພີ່ມຂຶ້ນ 701 ຄົນ ໃນນັ້ນແຮງງານທາງກົງເພີ່ມຂຶ້ນ 2% ເມື່ອທຽບໃສ່ປີທີ່ຜ່ານມາ. ຈາກຮູບ 2 ສະແດງໃຫ້ເຫັນວ່າໃນປີ 2017 ຈາກແຮງງານທາງກົງຕໍ່ກັບຂະແໜງການທ່ອງທ່ຽວທັງໝົດ ມີແຮງງານທີ່ກ່ຽວຂ້ອງກັບທີ່ພັກແຮມ 25 %.

ທີ່ພັກແຮມບໍ່ພຽງແຕ່ເປັນທຸລະກິດໜຶ່ງທີ່ໃຫ້ບໍລິການໃນການຮອງຮັບແກ່ແຂກຄົນທີ່ມາຢ້ຽມຊົມປະເທດລາວ ແລະ ແຂວງຫຼວງພະບາງ, ມັນຍັງໄດ້ມີບົດບາດ ແລະ ຄວາມສຳຄັນຂອງທີ່ພັກແຮມຕໍ່ກັບການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນລາວຈຳນວນບໍ່ໜ້ອຍໂດຍສະເພາະປະຊາຊົນແຂວງຫຼວງພະບາງ, ເຊິ່ງເຫັນໄດ້ຈຳນວນບຸກຄະລາກອນທີ່ປະກອບອາຊີບທີ່ກ່ຽວຂ້ອງກັບທີ່ພັກແຮມແມ່ນມີການເພີ່ມຂຶ້ນໃນທຸກໆປີ ພ້ອມກັນນັ້ນວຽກງານໃນຂະແໜງການນີ້ແມ່ນເປັນໂອກາດໃນການປະກອບອາຊີບໃຫ້ແກ່ຜູ້ດ້ອຍໂອກາດທີ່ມີວຽກເຮັດງານທຳ. ອີງຕາມຂໍ້ມູນຈາກຕາຕະລາງ 1, ສະແດງໃຫ້ເຫັນວ່າໃນປີ 2005 ມີບຸກຄະລາກອນທີ່ປະກອບອາຊີບກ່ຽວກັບທີ່ພັກແຮມທີ່ເປັນພົນລະເມືອງລາວຈຳນວນ 476 ຄົນ ໃນນັ້ນບຸກຄະລາກອນເພດຍິງກວມ 48% ມາຮອດປີ 2011 ບຸກຄະລາກອນທີ່ປະກອບອາຊີບກ່ຽວກັບທີ່ພັກແຮມຈຳນວນ 1.090 ຄົນ ບຸກຄະລາກອນເພດຍິງກໍ່ເພີ່ມຂຶ້ນໄປຕາມກັນເປັນ 556 ຄົນ. ແຕ່ຊ່ວງປີ 2011 ຫາ ມາເຖິງປີ 2017 ບຸກຄະລາກອນທີ່ປະກອບອາຊີບກ່ຽວກັບທີ່ພັກແຮມໄດ້ມີອັດຕາເພີ່ມຂຶ້ນ 1.271 ຄົນ ບຸກຄະລາກອນເພດຍິງເພີ່ມຂຶ້ນແມ່ນ 357 ຄົນ.

ສະນັ້ນ, ເພື່ອເປັນການຮອງຮັບກັບການຂະຫຍາຍຕົວຂອງການທ່ອງທ່ຽວ ການພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວ ກໍ່ຄືການພັດທະນາບຸກຄະລາກອນກ່ຽວກັບທີ່ພັກແຮມ ອຳນາດການປົກຄອງແຂວງຫຼວງພະບາງໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຢ່າງຈິງຈັງ, ເຫັນໄດ້ຈາກ ແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ແຂວງຫຼວງພະບາງ 2011-2020 ໄດ້ມີການຈັດຝຶກອົບຮົມວຽກງານບໍລິການ ໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ ຈຳນວນ 7 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 448 ຄົນ, ຍິງ 359 ຄົນ, ຝຶກອົບຮົມວຽກງານການຕ້ອນຮັບ ແລະ ເປັນເຈົ້າພາບທີ່ດີ ຈຳວນ 2 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດຈຳນວນ 280 ຄົນ, ຍິງ 160 ຄົນ. (ແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອວທ່ຽວ ແຂວງຫຼວງພະບາງ 2011-2020, ໜ້າ 24)

ຮູບ 3: ສະແດງແຮງງານທາງກົງ ແລະ ທາງອ້ອມໃນຂະແໜງການທ່ອງທ່ຽວແຕ່ປີ 2016 ຫາ 2017




ແຫຼ່ງຂໍ້ມູນ: ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ 2017

ຮູບ 4: ສະແດງເປີເຊັນແຮງງານທີ່ກ່ຽວຂ້ອງກັບທີ່ພັກແຮມ ຈາກແຮງງານທາງກົງ ປີ 2017




ແຫຼ່ງຂໍ້ມູນ: ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ 2017

ຕາຕະລາງ 2: ຈຳນວນແຮງງານໃນຂະແໜງທີ່ພັກແຮມ ແຂວງຫຼວງພະບາງ ແຕ່ປີ 2005-2017

| ປີ | ທີ່ພັກແຮມ | ພ/ງ ຄົນລາວ | | ພ/ງ ຄົນຕ່າງປະເທດ | | ລວມ | | |
|---|---|---|---|---|---|---|---|---|
| | | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ລວມ |
| 2005 | 163 | 248 | 228 | 0 | 0 | 248 | 228 | 476 |
| 2006 | 173 | 272 | 242 | 0 | 0 | 272 | 242 | 514 |
| 2007 | 224 | 319 | 269 | 0 | 0 | 319 | 269 | 588 |
| 2008 | 272 | 524 | 484 | 0 | 0 | 524 | 484 | 1.008 |
| 2009 | 296 | 584 | 564 | 0 | 0 | 584 | 564 | 1.148 |
| 2010 | 304 | 631 | 601 | 0 | 0 | 631 | 601 | 1.232 |
| 2011 | 335 | 763 | 779 | 19 | 5 | 782 | 784 | 1.566 |
| 2012 | 365 | 792 | 826 | 22 | 7 | 814 | 833 | 1.647 |
| 2013 | 380 | 816 | 853 | 28 | 11 | 844 | 864 | 1.708 |
| 2014 | 397 | 986 | 1.023 | 30 | 15 | 1.016 | 1.038 | 2.054 |
| 2015 | 403 | 1.036 | 1.084 | 35 | 19 | 1.071 | 1.103 | 2.174 |
| 2016 | 415 | 1.043 | 1.087 | 41 | 24 | 1.084 | 1.111 | 2.195 |
| 2017 | 430 | 1.632 | 1.109 | 54 | 32 | 1.686 | 1.141 | 2.827 |

ແຫຼ່ງຂໍ້ມູນ: ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ 2017

### 3.1.3 ດ້ານເສດຖະກິດ

ອີງຕາມບົດລາຍງານສະຖິຕິການທ່ອງທ່ຽວ ຂອງແຂວງຫຼວງພະບາງ ໃນປີ 2017, ເຫັນວ່າລາຍຮັບທີ່ໄດ້ຈາກການດຳເນີນທຸລະກິດທີ່ພັກແຮມແມ່ນລາຍຮັບທາງກົງໜຶ່ງຂອງຂະແໜງການທ່ອງທ່ຽວ, ນອກນັ້ນ ກໍ່ຍັງມີລາຍຮັບທາງກົງອື່ນເຊັ່ນ: ຮ້ານອາຫານ, ບໍລິສັດທ່ອງທ່ຽວ , ສະຖານທີ່ບັນເທີງ, ບໍລິສັດໂດຍສານຕ່າງໆ, ຕົວແທນຂາຍປີ້, ຮ້ານນວດ, ຮ້ານຂາຍເຄື່ອງທີ່ລະນຶກ, ແຫຼ່ງທ່ອງທ່ຽວ, ແລະ ຊຸມຊົນທີ່ມີສ່ວນຮ່ວມໃນການທ່ອງທ່ຽວເປັນຕົ້ນ. ສະນັ້ນ, ເມື່ອນັກທ່ອງທ່ຽວມີການເພີ່ມຂຶ້ນ ລາຍຮັບທີ່ໄດ້ຈາກການທ່ອງທ່ຽວກໍ່ເພີ່ມຂຶ້ນ ແລະ ກໍ່ສົ່ງຜົນໃຫ້ລາຍຮັບທາງດ້ານການດຳເນີນທຸລະກິດທີ່ພັກແຮມເພີ່ມຂຶ້ນເຊັ່ນກັນ.

ລາຍຮັບຈາກການທ່ອງທ່ຽວຢູ່ນະຄອນຫຼວງພະບາງ ແຂວງຫຼວງພະບາງ, ໃນປີ 2005 ແມ່ນໄດ້ມີລາຍຮັບຈາກການທ່ອງທ່ຽວ 14.024.745 ໂດລາສະຫະລັດ. ມາ

ຮອດປີ 2011 ເຫັນວ່າມີລາຍຮັບ 96.077.100 ໂດລາສະຫະລັດ ເຊິ່ງເຫັນວ່າຖ້າທຽບໃສ່ປີ 2011 ແມ່ນ ມີອັດຕາເພີ່ມຂຶ້ນ 82.052.355 ໂດລາສະຫະລັດ. ມາຮອດໄລຍະປີ 2017 ແມ່ນມີລາຍຮັບ 174.515.598 ໂດລາສະຫະລັດ. ຖ້າທຽບໃສປີ 2011 ແມ່ນເພີ່ມຂຶ້ນ ຈຳນວນ 78.438.498 ໂດລາສະຫະລັດ ເຫັນວ່າລາຍຮັບຈາກການທ່ອງທ່ຽວແມ່ນມີລັກສະນະເພີ່ມຂຶ້ນໄປຢ່າງຕໍ່ເນື່ອງ ແລະ ສາມາດສ້າງແຫຼ່ງລາຍຮັບເຂົ້າງົບປະມານໄດ້ຢ່າງເຕັມສ່ວນ.

ຕາຕະລາງ 3: ລາຍຮັບທີ່ໄດ້ຈາກການທ່ອງທ່ຽວ ແລະ ການພັກແຮມ ແຂວງຫຼວງພະບາງ ແຕ່ປີ 2005-2017

| ປີ | ຈຳນວນນັກທ່ອງທ່ຽວ (ຄົນ) | ລາຍຮັບ ($) | ໄລຍະການພັກແຮມຂອງນັກທ່ອງທ່ຽວສາກົນ (ຄືນ) | ສະເລ່ຍຄ່າໃຊ້ຈ່າຍຂອງນັກທ່ອງທ່ຽວສາກົນ/ວັນ ($) | ຄ່າໃຊ້ຈ່າຍໃນການພັກແຮມຕໍ່ວັນ ($) | ຄ່າໃຊ້ຈ່າຍໃນການພັກແຮມຂອງນັກທ່ອງທ່ຽວສາກົນ/ປີ ($) | ປຽບທຽບລາຍຮັບການທ່ອງທ່ຽວ ແລະ ລາຍຮັບການພັກແຮມ (%) |
|---|---|---|---|---|---|---|---|
| 2005 | 133.569 | 14.024.745 | 3 | 35 | 7 | 934.983 | 7 |
| 2006 | 151.703 | 30.340.600 | 4 | 50 | 10 | 1.517.030 | 5 |
| 2007 | 186.819 | 46.704.750 | 5 | 50 | 10 | 1.868.190 | 4 |
| 2008 | 231.575 | 57.893.750 | 5 | 50 | 10 | 2.315.750 | 4 |
| 2009 | 245.083 | 85.779.050 | 5 | 70 | 14 | 3.431.162 | 4 |
| 2010 | 216.864 | 75.902.400 | 5 | 70 | 14 | 3.036.096 | 4 |
| 2011 | 388.130 | 96.077.100 | 5 | 70 | 14 | 3.843.084 | 4 |
| 2012 | 410.855 | 110.329.875 | 5 | 75 | 15 | 4.413.195 | 4 |
| 2013 | 540.035 | 128.479.125 | 5 | 75 | 15 | 5.139.165 | 4 |
| 2014 | 531.327 | 142.124.625 | 5 | 75 | 15 | 8.684.985 | 6 |
| 2015 | 607.584 | 167.202.000 | 5 | 75 | 15 | 6.688.080 | 4 |
| 2016 | 643.319 | 176.094.750 | 5 | 75 | 15 | 7.043.790 | 4 |
| 2017 | 655.412 | 174.515.598 | 4,5 | 82 | 16,4 | 7.756.249 | 4 |

ແຫຼ່ງຂໍ້ມູນ: ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ 2017

ຈາກຕາຕະລາງ 3 ສະແດງໃຫ້ເຫັນວ່າລາຍຮັບຂອງການທ່ອງທ່ຽວທີ່ໄດ້ຈາກທຸລະກິດທີ່ພັກແຮມໃນແຕ່ລະປີແມ່ນກວມ 4-7%, ຄ່າໃຊ້ຈ່າຍຂອງນັກທ່ອງທ່ຽວຕໍ່ກັບທີ່ພັກແຮມໃນປີ 2005 ແມ່ນ 937.983 ໂດລາສະຫະລັດ ກວມເອົາ 7% ຂອງລາຍຮັບການທ່ອງທ່ຽວທັງໝົດ, ໃນປີ 2010 ຄ່າໃຊ້ຈ່າຍຕໍ່ກັບການພັກແຮມຂອງນັກທ່ອງທ່ຽວເພີ່ມຂຶ້ນມາເປັນ 3.036.096 ໂດລາສະຫະລັດ ກວມເອົາ 4% ຂອງລາຍຮັບການທ່ອງທ່ຽວທັງໝົດ, ໃນປີ 2017 ຄ່າໃຊ້ຈ່າຍຕໍ່ກັບການພັກແຮມຂອງນັກທ່ອງທ່ຽວແມ່ນ 7.756.249 ໂດລາສະຫະລັດ ກວມເອົາ 4% ຂອງລາຍຮັບການທ່ອງທ່ຽວທັງໝົດ.

### 3.2 ຜົນກະທົບທາງດ້ານບວກ - ດ້ານລົບຂອງການພັດທະນາຂອງທຸລະກິດໂຮງແຮມຕໍ່ກັບເມືອງມໍລະດົກໂລກ

- **ດ້ານບວກ**
  - ຫຼວງພະບາງເປັນເມືອງມໍລະດົກໂລກ ແລະ ເປັນຈຸດໝາຍປາຍທາງຂອງການທ່ອງທ່ຽວໂດຍສະເພາະແມ່ນແຫຼ່ງທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນາທຳ ທີ່ມີຄວາມໂດດເດັ່ນເປັນສິ່ງດຶງດູດນັກທ່ອງທ່ຽວ ແລະ

ສາມາດດຶງດູດໃຫ້ນັກລົງທຶນເຂົ້າມາລົງທຶນໃນຂະແໜງການທ່ອງທ່ຽວນັບມື້ນັບຫຼາຍຂຶ້ນ;

- ການໄດ້ຮັບຜົນປະໂຫຍດຈາກກຸ່ມປະຊາຄົມເສດຖະກິດ ແລະ ການເປີດການຄ້າເສລີເຮັດໃຫ້ນັກທ່ອງທ່ຽວ ແລະ ນັກລົງທຶນເຂົ້າມາທ່ອງທ່ຽວຫຼວງພະບາງ ຈຶ່ງສາມາດເຮັດທຸລະກິດທາງການບໍລິການໄດ້ຮັບການະຫຍາຍຕົວ ຢ່າງວ່ອງໄວ ແລະ ສາມາດສ້າງລາຍໄດ້ໃຫ້ຫຼວງພະບາງສູງສຸດ 174.515.598 ໂດລາສະຫະລັດ;
- ສາມາດສ້າງງານ,ສ້າງອາຊີບໃຫ້ແກ່ບຸກຄົນໃນທ່ອງຖິ່ນເມື່ອກິດຈະກຳທາງການທ່ອງ ທ່ຽວໄດ້ມີການຂະຫຍາຍຕົວຂຶ້ນ ທຸລະກິດທີ່ກ່ຽວຂ້ອງຕ່າງໆເຊັ່ນ: ຮ້ານອາຫານ, ບໍລິການຂົນສົ່ງ, ຮ້ານຂາຍຂອງທີ່ລະນຶກຕ່າງໆ ແຮງງານໃນຂະແໜງການເຫຼົ່ານີ້ຕ້ອງໄດ້ມີການປັບຕົວເພື່ອຮອງຮັບນັກທ່ອງທ່ຽວທີ່ຈະເດີນທາງເຂົ້າມາໃຊ້ບໍລິການເຊິ່ງມີຄວາມຈຳເປັນທີ່ຈະຕ້ອງໃຊ້ແຮງງານໃນລະດັບຕ່າງໆໃຫ້ຫຼາຍຂຶ້ນ;
- ສິນຄ້າພື້ນເມືອງ, ສິນຄ້າກະສິກຳ, ງານຝີມືຕ່າງໆ ສາມາດຂາຍໄດ້ໃນລາຄາສູງ ແລະ ເປັນທີ່ຍອມຮັບຂອງນັກທ່ອງທ່ຽວຫຼາຍຂຶ້ນ;
- ສາມາດຊ່ວຍໃຫ້ປະຊາຊົນໄດ້ເຫັນຄວາມສຳຄັນຂອງແຫຼ່ງທ່ອງທ່ຽວ ແລະ ວັດທະນາທຳ;
- ຊ່ວຍໃຫ້ສະພາບແວດລ້ອມຂອງຊຸມຊົນທ້ອງຖິ່ນໄດ້ຮັບການພັດທະນາ ແລະ ມີຄວາມຈະເລີນ;
- ເປັນການສ້າງຄວາມໝັ້ນຄົງໃຫ້ແກ່ປະເທດຊາດເພາະການເພີ່ມຂຶ້ນຂອງທຸລະກິດທີ່ພັກແຮມ ແລະ ທຸລະກິດທີ່ກ່ຽວຂ້ອງກັບການທ່ອງທ່ຽວແມ່ນສາມາດສ້າງລາຍຮັບໃຫ້ແກ່ປະເທດຊາດໄດ້.

➢ **ດ້ານລົບ**

- ຄ່າຄອງຊີບໂດຍລວມຂອງແຂວງມີການເພີ່ມຂຶ້ນສູງ ອັນເນື່ອງມາຈາກການເພີ່ມຂຶ້ນຂອງຜູ້ບໍລິໂພກ ກໍ່ຄືການເພີ່ມຂຶ້ນຂອງນັກທ່ອງທ່ຽວ;
- ການເສຍປຽບທາງດ້ານຄ່າຈ້າງແຮງງານ ເນື່ອງຈາກແຮງງານລາວຍັງບໍ່ແຂງແຮງບາງທັກສະໂດຍສະເພາະແມ່ນທັກສະການສື່ສານທາງດ້ານພາສາຕ່າງປະເທດ;
- ຄວາມແຕກຕ່າງທາງດ້ານວັດທະນາທຳຂອງນັກທ່ອງທ່ຽວທີ່ເຂົ້າມາເຮັດໃຫ້ເກີດມີການນຳເອົາວັດທະນາທຳຂອງຕ່າງປະເທດນຳມາໃຊ້ຫຼາຍຂຶ້ນ;
- ການເດີນທາງເຂົ້າມາຂອງນັກທ່ອງທ່ຽວໃນຈຳນວນທີ່ຫຼາຍຂຶ້ນສິ່ງຜົນເຮັດໃຫ້ສະຖານທີ່ຕ່າງໆມີການຊຸດໂຊມ ແລະ ເສື່ອມສະພາບ;
- ສິ່ງກໍ່ສ້າງທີ່ເປັນເອກະລັກຂອງຫຼວງພະບາງ ໄດ້ມີການຫັນປ່ຽນມາເປັນໂຮງແຮມເຮັດໃຫ້ສະພາບທີ່ຢູ່ອາໄສຂອງຄົນຫຼວງພະບາງມີທ່າອ່ຽງທີ່ປ່ຽນແປງ;
- ບາງໂຮງແຮມທີ່ສ້າງຂຶ້ນໃນກາງເມືອງ ຫຼື ຈຸດສຸມຂອງຕົວເມືອງເຮັດໃຫ້ການສັນຈອນຕິດຄັດ ແລະ ເກີດອຸປະຕິເຫດ.

### 3.3 ສຶກສານະໂຍບາຍຂອງລັດຖະບານຕໍ່ກັບການພັດທະນາທຸລະກິດໂຮງແຮມໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ

ແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ V (2001-2005) ເປົ້າໝາຍລວມຂອງແຜນການ 5 ປີໄລຍະນີ້ແມ່ນຮັບປະກັນໃຫ້ປະເທດສືບຕໍ່ຄວາມສະຫງົບດ້ານສັງຄົມ ແລະ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ ແລະ ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງໂດຍໄດ້ວາງຍຸດທະສາດຄື: ຍຸດທະສາດການຫັນເປັນອຸດສະຫະກຳ ແລະ ທັນສະໄໝ, ຍຸດທະສາດການເຕີບໂຕ ແລະ ຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ ນອກຈາກນີ້ຍັງມີນິຕິກຳຕ່າງໆເພື່ອຮອງຮັບແກ່ວິໄສທັດຂອງປີ 2020 ຂອງລັດຖະບານຄືການນຳເອົາປະເທດໃຫ້ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ, ລັດຖະບານ ຕີລາຄາສູງຄວາມສຳຄັນຂອງການເຊື່ອມໂຍງກັບພາກພື້ນ ແລະ ເລັ່ງໃສ່ໃຫ້ ສປປ ລາວ ກາຍເປັນປະເທດທີ່ເຊື່ອມໂຍງທາງດ້ານເສດຖະກິດພ້ອມທັງຍາດແຍ່ງເອົາການລົງທຶນຈາກຕ່າງປະເທດເຂົ້າໃສ່ໃນຂະແໜງທີ່ເປັນທ່າແຮງເຊັ່ນ: ອຸດສະຫະກຳທາງດ້ານບໍ່ແຮ່, ອຸດສະຫະກຳທາງດ້ານພະລັງງານໄຟຟ້າ,ອຸດສະຫະກຳທາງດ້ານການບໍລິການ

ຕ່າງໆ (ແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ແຂວງຫຼວງພະບາງ, 2011-2020).

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010) ຈຸດໝາຍຂອງແຜນໄລຍະນີ້ແມ່ນຍູ້ແຮງການເຕີບໂຕຂອງເສດຖະກິດດ້ວຍຈັ່ງຫວະໄວ ແລະ ປ່ວແປງການເປັນຢູ່ຂອງປະຊາຊົນ, ປ່ຽນແປງໂຄງປະກອບຂອງເສດຖະກິດຢ່າງແຂງແຮງ. ການທ່ອງທ່ຽວສາມາດເພີ່ມຊ່ອງທາງກ່ຽວກັບການສ້າງລາຍໄດ້, ປະຊາຊົນມີວຽກເຮັດງານທຳ, ມີພື້ນຖານການດຳລົງຊີວິດທີ່ດີຂຶ້ນ ແລະ ໄດ້ຮັບການພັດທະນາເພື່ອຮອງຮັບການທ່ອງທ່ຽວ, ສົ່ງເສີມການຜະລິດສິນຄ້າທີ່ເປັນເອກະລັກສະເພາະຂອງແຕ່ລະທ່ອງຖິ່ນ, ປັບປຸງຖານຂໍ້ມູນດ້ານການບໍລິການ ແລະ ການທ່ອງທ່ຽວ.

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2017) ໄລຍະແຫ່ງການພັດທະນາຂອງທຸລະກິດການທ່ອງທ່ຽວ ແລະ ທີ່ພັກແຮມ ເຊິ່ງໄດ້ມີການວາງແຜນຍຸດທະສາດການພັດທະນາຢ່າງເປັນລະບົບພ້ອມທັງຊຸກຍູ້ເສດຖະກິດຂອງແຂວງໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ສ້າງວຽກເຮັດງານທຳໃຫ້ປະຊາຊົນທ້ອງຖິ່ນ ແລະ ນຳເອົາຄວາມສີວິໄລມາສູ່ສັງຄົມ. ອຳນາດການປົກຄອງຂອງແຂວງຫຼວງພະບາງໄດ້ວາງນະໂຍບາຍພັດທະນາ, ສົ່ງເສີມການທ່ອງທ່ຽວ. ສຸມໃສ່ໃນການບຸກເບີກທຸລະກິດໂຮງແຮມ, ລີສອດ, ເຮືອນພັກ, ສ້າງສິ່ງອຳນວຍຄວາມສະດວກ ແລະສະໜອງດ້ານວຽກງານການບໍລິການ. ໄດ້ປະກອບອາຊີບເຂົ້າໃນຂະແໜງການບໍລິການໃຫ້ຫຼາຍຂຶ້ນ ແລະ ນະໂຍບາຍພື້ນເດັ່ນທີ່ກ່ຽວຂ້ອງກັບທຸລະກິດເຮືອນພັກ.

### 4. ວິພາກຜົນ (Discussion)

ເຖິງວ່າວຽກການທ່ອງທ່ຽວ ຫຼື ການບໍລິການບາງສ່ວນລັດຖະບານໄດ້ສະຫງວນໄວ້ໃຫ້ຄົນລາວເປັນຄົນປະກອບອາຊີບ ຫຼື ດຳເນີນທຸລະກິດ, ແຕ່ກໍ່ມີບາງຂະແໜງການໃຫ່ຍທີ່ລັດຖະບານໄດ້ມີການເປີດກ້ວາງໃຫ້ກັບນັກລົງທຶນຕ່າງປະເທດເຂົ້າມາລົງທຶນ ແລະ ປະກອບອາຊີບຢູ່ໃນປະເທດລາວໄດ້ ເພື່ອເຮັດໃຫ້ວຽກງານທາງດ້ານການບໍລິການ ທີ່ພັກແຮມ ມີການພັດທະນາໃຫ້ທຽບເທົ່າກັບສາກົນ.

ແຕ່ປີ 2006-2010 ເຫັນໄດ້ວ່າມີນັກທ່ອງທ່ຽວ 206.408,8 ອັດຕາເພີ່ມຂຶ້ນຂອງນັກທ່ອງທ່ຽວ 4,6% ແລະ ລາຍຮັບຈາກການທ່ອງທ່ຽວ 59,324,110 ໂດລາສະຫະລັດ. ແຕ່ປີ 2010-2017 ເຫັນໄດ້ວ່າມີຈຳນວນນັກທ່ອງທ່ຽວ 539.523,14 ອັດຕາເພີ່ມຂຶ້ນຂອງນັກທ່ອງທ່ຽວ 18,81% ແລະ ລາຍຮັບຈາກການທ່ອງທ່ຽວ 142.117.581,85 ໂດລາສະຫະລັດ. ໂດຍລວມແລ້ວທາງດ້ານເສດຖະກິດໃນໄລຍະປີ 2005-2017 ຈຳນວນນັກທ່ອງທ່ຽວເຂົ້າມາທ່ຽວຫຼວງພະບາງແມ່ນມີຈຳນວນເພີ່ມຂຶ້ນສະເລ່ຍ 11,81% ການທ່ອງທ່ຽວຢູ່ແຂວງຫຼວງພະບາງໄດ້ມີການເຕີບໂຕ ແລະ ໄດ້ເຮັດໃຫ້ຫຼວງພະບາງມີລາຍຮັບຈາກການທ່ອງທ່ຽວສະເລ່ຍສູງເຖິງ 142.117.581,85 ໂດລາສະຫະລັດ. ສາມາດສະຫຼຸບ ຫຼື ຄິດໄລ່ຫາລາຄາຈາກລາຍຮັບສະເລ່ຍຂອງການຂາຍຫ້ອງພັກໃນປີ 2011 ແມ່ນສະເລ່ຍມີ 19.555.110 ໂດລາສະຫະລັດ. ໃນປີ 2012 ສະເລ່ຍ 21.667.590 ໂດລາສະຫະລັດ. ໃນປີ 2013 ສະເລ່ຍ 22.797.180 ໂດລາສະຫະລັດ. ໃນປີ 2014 ສະເລ່ຍມີ 27.344.880 ໂດລາສະຫະລັດ. ໃນປີ 2015 ສະເລ່ຍ 28.078.380 ໂດລາສະຫະລັດ. ໃນປີ 2016ສະເລ່ຍມີ 28.694.520 ໂດລາສະຫະລັດ. ໃນປີ 2017 ສະເລ່ຍມີ 32.274.000 ໂດລາສະຫະລັດ ເຊິ່ງລວມທັງໝົດໃນ 7 ປີ ຈາກປີ 2011-2017 ແລ້ວມີລາຍຮັບຈາກການຂາຍຫ້ອງພັກແມ່ນ 180.411.660 ໂດລາສະຫະລັດ (ດາລຸນນີ ມະນີວັນ 2019).

ສະຫຼຸບລາຍຮັບຈາກການທ່ອງທ່ຽວໃນປີ 2011 ມີ 96.077.100 ໂດລາສະຫະລັດ ແລະ ລາຍຮັບຈາກການຂາຍຫ້ອງພັກມີ 19.555.110 ໂດລາສະຫະລັດ, ໃນປີ 2012 ລາຍຮັບຈາກການທ່ອງທ່ຽວມີ 110.329.875 ໂດລາສະຫະລັດ ແລະ ລາຍຮັບຈາກການຂາຍຫ້ອງພັກ 21.667.590 ໂດລາສະຫະລັດ. ໃນປີ 2013 ລາຍຮັບຈາກການທ່ອງທ່ຽວມີ 128.479.125 ໂດລາສະຫະລັດ ແລະ ລາຍຮັບຈາກການຂາຍຫ້ອງພັກມີ 22.797.180 ໂດ

ລາສະຫະລັດ. ໃນປີ 2014 ລາຍຮັບຈາກການທ່ອງທ່ຽວມີ 142.124.625 ໂດລາສະຫະລັດ ແລະ ລາຍຮັບຈາກການຂາຍຫ້ອງພັກມີ 27.344.880 ໂດລາສະຫະລັດ ແລະ ໃນປີ 2015 ລາຍຮັບຈາກການທ່ອງທ່ຽວມີ 167.202.000 ໂດລາສະຫະລັດ ລາຍຮັບຈາກການຂາຍຫ້ອງພັກມີ 28.078.380 ໂດລາສະຫະລັດ. ໃນປີ 2016 ລາຍຮັບຈາກການທ່ອງທ່ຽວມີ 176.094.750 ໂດລາສະຫະລັດ ແລະ ລາຍຮັບຈາກການຂາຍຫ້ອງພັກມີ 32.274.000 ໂດລາສະຫະລັດ. ໃນປີ 2017 ລາຍຮັບຈາກການທ່ອງທ່ຽວມີ 174.515.598 ໂດລາສະຫະລັດ ແລະ ລາຍຮັບຈາກການຂາຍຫ້ອງພັກມີ 142.241.598 ໂດລາສະຫະລັດ . ເຊິ່ງລວມແລ້ວໃນໄລຍະ 7 ປີ ເລີ່ມແຕ່ປີ 2011-2017 ລວມແລ້ວລາຍໄດ້ຈາກການທ່ອງທ່ຽວມີການເພີ່ມຂຶ້ນຈາກທຸກໆປີເຊິ່ງມີເຖິງ 994.823.073 ໂດລາສະຫະລັດ ແລະ ລາຍຮັບຈາກການຂາຍຫ້ອງພັກແມ່ນມີເຖິງ 180.411.660 (ດາລຸນນີ ມະນີວັນ 2019).

ເຫັນໄດ້ວ່າລາຍໄດ້ຈາກການຂາຍຫ້ອງພັກເຊິ່ງຄິດໄລ່ເປັນເປີເຊັນມີຄື: ໃນປີ 2011 ລາຍໄດ້ຈາກການຂາຍຫ້ອງພັກແມ່ນສູງເຖິງ 20% ເປັນເພາະໄລຍະນີ້ທຸລະກິດທາງເຮືອນພັກແມ່ນໄດ້ຮັບຄວາມນິຍົມໜ້ອຍ ແລະ ໄດ້ລາຄາສູງເພາະຍັງບໍ່ທັນມີຄູ່ແຂ່ງ ແຕ່ໃນປີຕໍ່ມາ ໃນປີ 2012 ເຫັນວ່າລາຍໄດ້ຈາກການຂາຍຫ້ອງພັກແມ່ນມີພຽງ 19% ເທົ່ານັ້ນເພາະຄູ່ແຂ່ງທາງດ້ານເຮືອນພັກແມ່ນເພີ່ມຂຶ້ນເຮັດໃຫ້ລາຄາຂອງການຂາຍຫ້ອງພັກແມ່ນຕໍ່າລົງ ແລະ ໃນປີ 2013 ລາຍໄດ້ຈາກການຂາຍຫ້ອງພັກ ມີການຫຼຸດລົງເຖິງ 17% ໃນປີ 2014 ລາຍໄດ້ຈາກການຂາຍຫ້ອງພັກແມ່ນໄດ້ສູງຂຶ້ນສະເລ່ຍ 19%. ໃນປີ 2015 ໄດ້ຫຼຸດລົງສະເລ່ຍມີ 17% ໃນປີ 2016 ສະເລ່ຍ 16% ໃນປີ 2017 ສະເລ່ຍມີ 18%. ດັ່ງນັ້ນ ທຸລະກິດທີ່ພັກແຮມໃນຫຼວງພະບາງໄດ້ມີການແຂ່ງຂັນທີ່ສູງຂຶ້ນ ການປັບລາຄາຫ້ອງພັກໃຫ້ສູງແມ່ນເປັນໄປໄດ້ຍາກ ແລະ ໃນປະຈຸບັນທຸລະກິດທາງດ້ານທີ່ພັກແຮມຂະໜາດນ້ອຍກໍ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວຫຼາຍຂຶ້ນຈຶ່ງເຮັດໃຫ້ລາຍໄດ້ຈາກການຂາຍຫ້ອງພັກຂອງທີ່ພັກແຮມແມ່ນມີການຫຼຸດລົງ.

**5. ສະຫຼຸບ (Conclusion)**

ສະຫຼຸບແລ້ວ ອຳນາດການປົກຄອງຂອງແຂວງຫຼວງພະບາງ ໄດ້ວ່າງນະໂຍບາຍພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໄດ້ດັ່ງນີ້: ເປີດກວ້າງການລົງທຶນຈາກນັກລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາຂະແໜງການທ່ອງທ່ຽວ ແລະ ພັດທະນາພື້ນຖານໂຄງລ່າງທີ່ຮອງຮັບໃຫ້ແກ່ການບໍລິການ, ການທ່ອງທ່ຽວ, ຊຸກຍູ້ໃຫ້ສະມາຄົມທ່ອງທ່ຽວໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ ໄດ້ເປີດການຕະຫຼາດ ເພື່ອດຶງດູດເອົານັກທ່ອງທ່ຽວຈາກປະເທດໃກ້ຄຽງເຂົ້າມາທ່ອງທ່ຽວຫຼວງພະບາງໃຫ້ຫຼາຍຂຶ້ນ. ປັບປຸງ ແລະ ພັດທະນາສະຖານທີ່ປະຫວັດສາດພາຍໃນຕົວເມືອງຫຼວງພະບາງໃຫ້ຄົງຄຸນຄ່າທາງດ້ານມໍລະດົກໂລກ, ສຸມໃສ່ໃນການບຸກເບີກທຸລະກິດໂຮງແຮມ, ລີສອດ, ເຮືອນພັກ. ສ້າງສິ່ງອຳນວຍຄວາມສະດວກ ແລະ ສະໜອງດ້ານວຽກງານການບໍລິການໃນເຂດດ່ານເຂົ້າ-ອອກ ລະຫວ່າງປະເທດໂດຍສະເພາະໜັງສືຜ່ານແດນ, ປັບປຸງຂອດການບໍລິການໃຫ້ທ່ວງທັນກັບເວລາທີ່ນັກທ່ອງທ່ຽວຕ້ອງການທີ່ຈະໃຊ້ບໍລິການ.

ພະແນກຖະແຫຼງຂ່າວ, ວັດທະນາທຳ ແລະ ການທ່ອງທ່ຽວໃນແຂວງຫຼວງພະບາງຍັງໄດ້ວາງນະໂຍບາຍເພື່ອເຮັດໃຫ້ປະຊາຊົນທີ່ດຳລົງຊີວິດໃນເຂດຫ່າງໄກສອກຫຼີກໄດ້ມີສ່ວນຮ່ວມ ໃນການປະກອບອາຊີບເຂົ້າໃນຂະແໜງການບໍລິການໂດຍຜ່ານການຈັດຕັ້ງໃນຮູບແບບອານຸລັກປະຊາຊົນມີສ່ວນຮ່ວມຫຼາຍຂຶ້ນ ແລະ ນະໂຍບາຍທີ່ພົ້ນເດັ່ນທີ່ກ່ຽວຂ້ອງກັບທຸລະກິດເຮືອນພັກ.

**6. ຄວາມຮູ້ບຸນຄຸນ (Acknowledgement)**

ໃນການສຶກສາຄັ້ງນີ້ສຳເລັດໄປດ້ວຍດີ ແລະ ຂໍ້ມູນຖືກເຜີຍແຜ່ກໍ່ຍ້ອນມີການຊ່ວຍເຫຼືອ ແລະ ໃຫ້ຄຳແນະນຳອັນລ້ຳຄ່າຈາກໝູ່ຄູ່, ອາຈານ, ຄະນະນຳ, ພາກສ່ວນທີ່ສະໜອງຂໍ້ມູນ ແລະ ຄະນະກຳມະການກວດແກ້ວາລະສານທຸກທ່ານທີ່ເຮັດບົດນີ້ສົມບູນແບບ. ຂ້າພະເຈົ້າຂໍອວຍພອນໄຊແດ່ບັນດາທ່ານຈົ່ງມີແຕ່ຄວາມຜາສຸກ ມີພາລະອານາໄມສົມບູນແລະ ຈະເລີນກ້າວໜ້າໃນໜ້າທີ່ວຽກງານທຸກປະການ ພ້ອມກັບພັດທະນາມະຫາວິທະຍາໄລສຸພານຸວົງໃຫ້ເຕີບໃຫຍ່ຂຶ້ນໄປເລື້ອຍໆ.

**7. ເອກະສານອ້າງອີງ (References)**

ເກົາລໍ, ເຢີມີວເຊຍ. 2019. *“ປັດໄຈດຶງດູດທີ່ເຮັດໃຫ້ລູກຄ້າເຂົ້າມາໃຊ້ບໍລິການຂອງຮ້ານອາຫານເອເລຟ໋ອງ ນະຄອນຫຼວງພະບາງ, ແຂວງຫຼວງພະບາງ”* ມະຫາວິທະຍາໄລສຸພານຸວົງ.

ດາລຸນນີ, ມະນີວັນ. 2019. *“ການພັດທະນາທຸລະກິດໂຮງແຮມພາຍຫຼັງເຂົ້າເປັນເມືອງມໍລະດົກໂລກ ຫຼວງພະບາງ”* ມະຫາວິທະຍາໄລ ສຸພານຸວົງ.

ເຣີ, ຫຼ້າ. 2018. *“ແຮງຈູງໃຈໃນການປະກອບອາຊີບວຽກງານພະແນກແມ່ບ້ານຂອງໂຮງແຮມລະດັບ 4 ດາວ ໃນເທດສະບານເມືອງຫຼວງພະບາງ”* ມະຫາວິທະຍາໄລສຸພານຸວົງ.

(2018). *ສະຖິຕິວຽກງານການທ່ອງທ່ຽວ.* ແຂວງຫຼວງພະບາງ: ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ.

(2017). *ບົດລາຍງານ.* ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ, ພະແນກຖະແຫຼງຂ່າວ , ວັດທະນະທຳ ແລະ ການທ່ອງທ່ຽວ. ແຂວງຫຼວງພະບາງ: ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ.

(2017). *ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ.* ແຂວງຫຼວງພະບາງ: ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

(2017). *ບົດລາຍງານສະຖິຕິການທ່ອງທ່ຽວຂອງແຂວງຫຼວງພະບາງ.* ແຂວງຫຼວງພະບາງ: ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ.

(2011-2020). *ແຜນຍຸດທະສາດພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ແຂວງຫຼວງພະບາງ.* ແຂວງຫຼວງພະບາງ: ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ.

Aloun BOUNMIXAY. 2018. *2018 Statistical Report on Tourism in Laos*. Vientiane Capital.

Lerdgrounprayad, Lamsan. 2561. “Behavior and Motivation for Staying in Hostels in Bangkok.” *Journal of Research and Development University of Rahsaphat* 1(13):7–22.

Pansaen, Nujaree. 2561. “Motivation the Investment in Boutique Hotels of the Entrepreneurs in Hua Hin - Cha Am.” *Journal of Raidusithani* 3(12):185–200.

SOMSAMONE, Vilayphone. 2018. “Urban Planning and Sustainable Development of Tourism in World Heritage Site, Luang Prabang Town.” *Souphanouvong University* 3(1):11–34.

*Wordometer*. (2020). Retrieved from https://www.worldometers.info/world-population/laos-population/#:~:text=The%20current%20population%20of%20the,year%20according%20to%20UN%20data.